# ໜັງສືເປໂຕທີສອງ

ໃຈຄວາມສຳຄັນ   ວັນຂອງພຣະເຈົ້າ

ຈຳນວນບົດ   ໓ ບົດ

## ວ່າດ້ວຍເວລາທີ່ຂຽນ

ໜັງສືນີ້ໄດ້ຂຽນພາຍຫລັງສະບັບທີ່ນຶ່ງ ແລະພາຍຫລັງໜັງສືທ່ານໄປໂລທັງໝົດ (໓:໑–໒; ໑໔–໑໖) ໂດຍໄດ້ຂຽນພຽງແຕ່ເລັກນ້ອຍກ່ອນທ່ານໄປໂລຈະຖືກຂ້າຕາຍ (໑:໑໓–໑໔; ໂຢຮັນ ໒໑:໑໘–໑໙) ສະນັ້ນຈຶ່ງຄິດວ່າທ່ານເປໂຕໄດ້ຂຽນໜັງສືນີ້ເມື່ອປີ ຄ.ສ. ໖໘

## ວ່າດ້ວຍຜູ້ຂຽນແລະຜູ້ຮັບໜັງສືນີ້

໑. ທ່ານເປໂຕຜູ້ຂຽນໜັງສືນີ້ ໄດ້ເປັນອັຄສາວົກຂອງພຣະເຢຊູ ບົດ ໑:໑

໒. ເພິ່ນໄດ້ເຫັນພຣະຣັດສມີຂອງພຣະອົງເມື່ອຢູ່ເທິງພູເຂົາ ບົດ ໑:໑໖–໑໘; ມັດທາຍ ໑໗:໑ - ໖

໓. ເພິ່ນເອງບອກວ່າໜັງສືນີ້ເປັນສະບັບທີສອງ ບົດ ໓:໑

໔. ໜັງສືນີ້ຂຽນເຖິງພວກທີ່ຮັບສະບັບທີ່ນຶ່ງ ບົດ ໓:໑

໕. ເພິ່ນບອກວ່າ ພວກທີ່ຮັບ ໜັງສືນີ້ ໄດ້ຮູ້ຈັກກັບເພິ່ນມາແລ້ວ ບົດ ໓:໑–໔; ໑:໑໒; ໓:໑໔,໑໗

໖. ເພິ່ນໄດ້ຂຽນໜັງສືສະບັບສອງນີ້ໃນປີ ຄ.ສ. ໖໘

## ວ່າດ້ວຍຄວາມມຸ່ງໝາຍ

໑. ເພື່ອເລົ້າໂລມອຸ້ມຊູພວກຄຣິສຕຽນທີ່ພັດພາກຈາກກັນ ໑ ເປໂຕ ໑:໑

໒. ເພື່ອບອກສອນແລະຕັກເຕືອນໃຫ້ຣະວັງພວກຄຣູສອນປອມ

໓. ເພື່ອໃຫ້ພວກເຂົາລະນຶກເຖິງການສະເດັດມາຂອງພຣະເຢຊູຄຣິດ

## ວ່າດ້ວຍເນື້ອຄວາມ

໑. ໃນບົດ ໓:໑໘ ບອກວ່າ ໃຫ້ຈະເຣີນຂຶ້ນໃນພຣະຄຸນແລະໃນການຮູ້ຈັກພຣະຄຣິດ ຜູ້ຊຶ່ງເປັນພຣະອົງເຈົ້າ ແລະຊຶ່ງເປັນພຣະຜູ້ຊ່ອຍໃຫ້ພົ້ນ ຂໍ້ນີ້ຖືວ່າສຳຄັນທີ່ສຸດ

໒. ໃນບົດ ໑:໒ ບອກວ່າ ພວກເຂົາ ໄດ້ຮັບ ພຣະຄຸນ ເພາະການ ຮູ້ຈັກພຣະຄຣິດ ດ້ວຍການຮູ້ຈັກພຣະເຢຊູຄຣິດນີ້ຈຶ່ງສາມາດຈະເຣີນຂຶ້ນ (໑:໓) ແຕ່ວ່າກ່ອນຈະຈະເຣີນຂຶ້ນໄດ້ ພວກເຂົາຈັກຕ້ອງອົດທົນແລະພຍາຍາມຈົນສຸດຄວາມສາມາດ ເພື່ອຂຶ້ນເຖິງຂັ້ນໄດແຫ່ງຄວາມຈະເຣີນຄືຄວາມບໍຣິສຸດນັ້ນ

໓. ໃນບົດ ໑:໑໖–໒໑ ກໍເປັນເຣື່ອງສຳຄັນເໝືອນກັນ ຄືທ່ານເປໂຕໄດ້ເວົ້າເຖິງພວກທີ່ຂຽນພຣະຄັມພີວ່າ ບໍ່ມີສັກຄຳດຽວທີ່ຂຽນຕາມລຳພັງໃຈຂອງມະນຸດເອງ ແຕ່ທຸກຄຳໄດ້ຂຽນດ້ວຍພຣະວິນຍານບໍຣິສຸດຊຶ່ງດົນບັນດານ

໔. ໃນບົດ ໒:໑—໑໐ ໄດ້ມີເນື້ອຄວາມເໝືອນກັນກັບທີ່ມີຢູ່ໃນໜັງສືຢູເດ ຄືທ່ານເປໂຕໄດ້ເວົ້າເຖິງພວກຄຣູສອນປອມ ວ່າພວກເຂົາຈະຖືກ ຕັດສິນ ລົງໂທດ ເໝືອນ ພວກ ເທວະດາ ທີ່ຊົ່ວ ຮ້າຍ ທັງຫລາຍ

ເໝືອນຄາວນ້ຳຖ້ວມໂລກໃນຄັ້ງບູຮານ ແລະເໝືອນເມືອງໂຊດົມກັບເມືອງໂຄໂມຣານັ້ນ

໔. ໃນບົດ ໓:໑–໑໐ ທ່ານເປໂຕບອກວ່າ ວັນສະເດັດປາກົດມາຂອງພຣະອົງເຈົ້າຈະມີຈິງແທ້ ເຖິງແມ່ນມີບາງຄົນເວົ້າວ່າ ວັນນັ້ນຈະຍັງບໍ່ທັນມີກໍຕາມ ເພາະສຳລັບພຣະເຈົ້ານັ້ນພັນປີກໍເໝືອນວັນນຶ່ງ ແລະທີ່ພຣະອົງຊົງຊ້ານານຢູ່ນີ້ ກໍເພາະພຣະອົງຊົງຮັກແພງມະນຸສໂລກ ດ້ວຍວ່າພຣະອົງຊົງມີ ພຣະປະສົງຢາກໃຫ້ພວກເຂົາເຖິງທີ່ລອດພົ້ນ ແລະໃນຂໍ້ ໑໑–໑໘ ຂອງບົດດຽວກັນນີ້ກໍບອກວ່າ ວັນນັ້ນຈະມາເໝືອນດັ່ງຂະໂມຍ ສະນັ້ນຈຶ່ງໃຫ້ທຸກຄົນປະພຶດດ້ວຍໃຈບໍຣິສຸດແລະໃຫ້ຈະເຣີນຂຶ້ນດ້ວຍພຣະຄຸນ ເພື່ອຕຽມຕົວແລະຄອຍຖ້າຮັບວັນນັ້ນ

໕. ໃນບົດ ໓:໗, ໑໐–໑໓ ທ່ານເປໂຕໄດ້ຂຽນບອກວ່າ ໃນວັນພິພາກສາຂອງພຣະເຈົ້ານັ້ນ ໂລກນີ້ຈະຖືກໄໝ້ດ້ວຍໄຟ ແລ້ວພຣະອົງຈະຊົງສ້າງຟ້າສວັນແລະແຜ່ນດິນຂຶ້ນໃໝ່

## ວ່າດ້ວຍການຈັດຫົວຂໍ້ຂອງບົດ

ບົດທີ ໑ ວ່າດ້ວຍໃຫ້ກ້າວໜ້າໃນພຣະຄຸນ

ບົດທີ ໒ ວ່າດ້ວຍໃຫ້ຣະວັງພວກຄຣູສອນປອມ

- ກ. ມູນເຫດທີ່ມີຄຣູສອນປອມ ຂໍ້ ໑–໓
- ຂ. ພວກເຂົາຈະຖືກຕັດສິນຢ່າງໃດ ຂໍ້ ໓–໙
- ຄ. ນິໄສສັນດານຂອງພວກເຂົາ ຂໍ້ ໑໐–໒໒

ບົດທີ ໓ ວ່າດ້ວຍວັນສະເດັດມາປາກົດຂອງພຣະອົງ

ກ. ຜູ້ບໍ່ເຊື່ອໃນວັນນັ້ນ ຂໍ້ ໑–໔
ຂ. ຄວາມອະທິບາຍເຖິງເລື່ອງວັນນັ້ນ ຂໍ້ ໔–໑໐
ຄ. ເຮົາຕ້ອງປະພຶດຢ່າງໃດໃນວັນນັ້ນ ຂໍ້ ໑໑–໑[illegible]